**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ສູນກາງສະຫະພັນກຳມະບານລາວ
ຫ້ອງການ

ເລກທີ 974 /ຫກ
ນະຄອນຫຼວງວຽງຈັນ, ວັນທີ 08 ມິຖຸນາ 2026

# ໜັງສືແຈ້ງເຊີນປະມູນ

1. ຫ້ອງການ ສູນກາງສະຫະພັນກຳທະບານລາວ ຂໍເຊີນບັນດາບໍລິສັດທີ່ສົນໃຈ ແລະ ມີຄຸນນະວຸທິເໝາະສົມ ເຂົ້າຍື່ນຊອງປະມູນ ສຳລັບການກໍ່ສ້າງສ້ອມແປງຕໍ່ເຕີມສູນຝຶກອົບຮົມວິຊາຊີບກຳມະບານ (ຕຶກ 6 ຊັ້ນ), ປ້ອມຍາມ, ສາງ ແລະ ຮົ້ວອ້ອມສຳນັກງານສູນກາງນສະຫະພັນກຳມະບານລາວ, ໄລຍະການສ້ອມແປງ 12 ເດືອນ;
2. ການປະມູນຈະດຳເນີນຕາມຂັ້ນຕອນການປະມູນເປີດກວ້າງທີ່ໄດ້ກຳນົດໄວ້ຢູ່ໃນກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດກົດຫມາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;
3. ການປະມູນນີ້ ອະນຸຍາດໃຫ້ທຸກໆບໍລິສັດທີ່ມີຄຸນນະວຸທິເຫມາະສົມ, ມີໃບອະນຸຍາດດຳເນີນທຸລະກິດຖືກຕ້ອງຕາມກົດໝາຍ ທີ່ກ່ຽວພັນກັບການກໍ່ສ້າງດັ່ງກ່າວ.
4. ບໍລິສັດທີ່ມີຄຸນວຸດທິເໝາະສົມ ແລະ ມີຄວາມສົນໃຈຕິດຕໍ່ພົວພັນໄດ້ທີ່ພະແນກແຜນການ ແລະ ການເງິນ, ຫ້ອງການສູນກາງສະຫະພັນກຳມະບານລາວ, ເບີໂທລະສັບ 020 98797826, 020 56289353 ແລະ ກວດກາເບິ່ງເອກະສານປະມູນໄດ້ທີ່ພະແນກແຜນການ ແລະ ການເງິນ ໃນໂມງລັດຖະການ;
5. ບໍລິສັດໃດ ທີ່ມີຄວາມສົນໃຈສາມາດຕິດຕໍ່ພົວພັນຊື້ເອກະສານປະມູນຄົບຊຸດເປັນພາສາລາວ ຕ້ອງຍື່ນໜັງສືສະເໜີໄດ້ທີ່ພະແນກແຜນການ ແລະ ການເງິນ, ຫ້ອງການ ສູນກາງສະຫະພັນກຳມະບານລາວ, ເລີ່ມແຕ່ວັນທີ 08 ມິຖຸນາ 2025, ໃນລາຄາ 4,000,000 ກີບ, ຈຳນວນເງິນດັ່ງກ່າວນີ້ ຈະບໍ່ມີການສົ່ງຄືນ ແລະ ວິທີການຊຳລະຕ້ອງຈ່າຍເປັນເງິນສົດ;
6. ຊອງປະມູນຕ້ອງສົ່ງກ່ອນເວລາ 14:00 ໂມງ ຂອງວັນທີ 24 ກໍລະກົດ 2026 ທີ່ຫ້ອງປະຊຸມນ້ອຍ ຊັ້ນ 04 ຕຶກສຳນັກງານສູນກາງສະຫະພັນກຳມະບານລາວ. ຊອງປະມູນໃດທີ່ສົ່ງຊ້າກວ່າເວລາທີ່ກຳນົດໄວ້ຈະບໍ່ຮັບເອົາ ແລະ ຈະສົ່ງຄືນໂດຍບໍ່ມີການເປີດຊອງ. ຊອງປະມູນທຸກໆຊອງຈະໄດ້ເປີດໃນເວລາ 14:00 ໂມງ ໂດຍຊ່ອງໜ້າຄະນະກຳມະການປະມູນ ແລະ ຕົວແທນຂອງຜູ້ປະມູນທີ່ສົນໃຈເຂົ້າຮ່ວມຕາມສະຖານທີ່ໄດ້ກຳນົດ;
7. ທຸກໆ ຊອງປະມູນຕ້ອງໄດ້ ມີຫນັງສືຄໍ້າປະກັນການປະມູນດ້ວຍກຽດ ຫລື ຫນັງສືຄໍ້າປະກັນການປະມູນຈາກທະນາຄານຢ່າງຫນ້ອຍບໍ່ໃຫ້ຫລຸດ 2% ຂອງລາຄາສະເໜີເຂົ້າປະມູນ.

**ຫົວໜ້າຫ້ອງການ**

ບຸນຈັນ ໃຈອີສານ